LALCO
LAO ASEAN LEASING PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 9300
ນະຄອນຫລວງວຽງຈັນ , ວັນທີ 17 ມິຖຸນາ 2024

ບົດລາຍງານ

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ ທີ່ນັບຖື,
ທ່ານຜູ້ອຳນວຍການໃຫຍ່ ຕະຫລາດຫລັກຊັບລາວ ທີ່ນັບຖື,
ທ່ານຜູ້ຖືຮຸ້ນຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຜນການຈັດຕັ້ງປະຕິບັດການເປີດເຜີຍຂໍ້ມູນ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຮຸ້ນ (ສະບັບປັບປຸງ) ເລກທີ 007/23/ຕລຊລ, ລົງວັນທີ 12 ກັນຍາ 2023;
- ອີງຕາມ ໜັງສືແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫລາດຫລັກຊັບ ລາວ ເລກທີ 718/ຕລຊລ, ລົງວັນທີ 03 ມິຖຸນາ 2024.

ບໍລິສັດລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານໃຫ້ຊາບ ສາເຫດທີ່ເປີດເຜີຍຂໍ້ມູນ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ລ່າຊ້າ ເນື່ອງຈາກບົດກວດສອບເອກະສານລາຍງານການເງິນແມ່ນຢູ່ໃນຂັ້ນຕອນການກະກຽມ ແລະ ຍັງຢູ່ໃນຂັ້ນຕອນຂອງການທົບທວນຄືນຂອງຜູ້ບໍລິຫານ. ສະນັ້ນ, ທາງບໍລິສັດຈະຄຶບຮ້ອນ ແລະ ເລັ່ງດຳເນີນການໃຫ້ສຳເລັດໂດຍໄວ ແລະ ຈະນຳໄປຮັບຮອງທ່ານກອງປະຊຸມສາມັນປະຈຳປີ. ແຜນການເປີດເຜີຍການຈັດຕັ້ງປະຕິບັດມີດັ່ງນີ້:

- ເອກະສານລາຍງານການເງິນທີ່ໄດ້ຮັບການກວດສອບແລ້ວ: ຈະສຳເລັດຊ້າສຸດບໍ່ເກີນ ວັນທີ 28 ມິຖຸນາ 2024 ແລະ ຈະເປີດເຜີຍພາຍຫຼັງກອງປະຊຸມສາມັນປະຈຳປີ;
- ສຳລັບກອງປະຊຸມສາມັນປະຈຳປີ: ຈະຈັດຂຶ້ນໃນເດືອນ ສິງຫາ 2024.

ດັ່ງນັ້ນ, ຈຶ່ງໄດ້ຮຽນລາຍງານມາຍັງທ່ານຊາບ ແລະ ຫວັງຢ່າງຍິ່ງວ່າ ທ່ານຈະພິຈາລະນາຕາມທາງຄອນດ້ວຍ.

ຜູ້ອຳນວຍການໃຫຍ່

Yoshihito Oshima

ສແກນດ້ວຍ CamScanner